ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

****** **** ******

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ: 27 /ຫກ

ນະຄອນຫຼວງວຽງຈັນ, ວັນທີ: 5 ກໍລະກົດ 2016


ສຳນັກງານ ຄຄຊ
ເລກທີ 0642
ວັນທີ 05 JUL 2016
ໂທລະສັບ 021 217770


ລາຍງານການເຄື່ອນໄຫວປະຈຳອາທິດ

ທີ 20/06/2016 ຫາ 24/06/2016 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ

ຂອງທະນາຄານແຫ່ງ ສປປ ລາວ

I. ວຽກງານການເມືອງແນວຄິດ

ພະນັກງານທຸກຄົນມີຄວາມອຸ່ນອ່ຽນທຸ່ນທ່ຽງ ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ ມີສະຕິຕໍ່ການຈັດຕັ້ງ ແລະ ລະບຽບກົດໝາຍຢ່າງເຄັ່ງຄັດ; ຕັ້ງໜ້າປະຕິບັດວຽກງານຕາມພາລະບົດບາດ, ຕາມການຈັດຕັ້ງມອບໝາຍ, ປະຕິບັດວຽກງານຕາມລະບອບລວມສູນປະຊາທິປະໄຕ ໂດຍບຸກຄົນຮັບຜິດຊອບ ແລະ ປະຕິບັດລະບຽບລັດຖະກອນຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ,

II. ວຽກງານວິຊາສະເພາະ

1. ສະພາບເສດຖະກິດເງິນຕາສາກົນ

1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາແຂງຄ່າຂຶ້ນ ເມື່ອທຽບໃສ່ເງິນເອີໂຣ ແລະ ບາງສະກຸນເງິນໃນພາກພື້ນອາຊີ ພາຍຫຼັງປະເທດອັງກິດປະກາດຖອນຕົວອອກຈາກການເປັນສະມາຊິກຂອງສະຫະພາບເອີຣົບ ສົ່ງຜົນໃຫ້ເງິນເອີໂຣອ່ອນຄ່າລົງ.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 17/06/2016 | ອາທິດນີ້ 24/06/2016 | ເປີເຊັນ ແຂງຄ່າ(+) /ອ່ອນຄ່າ(–) |
|---|---|---|---|
| ເອີໂຣ/ໂດລາ | 1,1251 | 1,1120 | 1,17% |
| ໂດລາ/ເຢນ | 104,39 | 102,79 | 1,56% |
| ໂດລາ/ບາດ | 35,27 | 35,36 | -0,27% |
| ໂດລາ/ເປໂຊ | 46,42 | 46,82 | -0,87% |
| ໂດລາ/ຣູເປັຍ | 13.350,89 | 13.348,89 | 0,01% |
| ໂດລາ/ໂດລາສິງກະໂປ | 1,3493 | 1,3541 | -0,36% |
| ໂດລາ/ຢວນ | 6,5879 | 6,6043 | -0,25% |

1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

ລາຄານ້ຳມັນໃນຕະຫຼາດໂລກເພີ່ມຂຶ້ນ 3,31% ຈາກ 48,66 ໂດລາ/ບາເຣວ ມາເປັນ 50,27 ໂດລາ/ບາເຣວ ພາຍຫຼັງປະເທດຈີນຜະລິດນ້ຳມັນດິບຫຼຸດລົງຈາກ 16,76 ລ້ານໂຕນ ມາເປັນ 7,4 ລ້ານໂຕນ ໃນເດືອນ 05/2016. ນອກຈາກນີ້, ຖັງນ້ຳມັນສຳຮອງຂອງອາເມລິກາຫຼຸດລົງກວ່າທີ່ຄາດໝາຍໄວ້ ບວກກັບນັກລົງທຶນມີຄວາມກັງວົນຕໍ່ອັງກິດທີ່ຖອນຕົວອອກຈາກສະຫະພາບເອີຣົບ. ສຳລັບລາຄາຄຳໃນຕະຫຼາດໂລກເພີ່ມຂຶ້ນ 1,75% ຈາກ 1.282,86 ມາເປັນ 1.305,27 ໂດລາ/ອອນ.

## 2. ສະພາບເສດຖະກິດເງິນຕາພາຍໃນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາອ່ອນຄ່າລົງ 0,04% ສໍາລັບ
ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນບາດແຂງຄ່າຂຶ້ນ 0,01% ສໍາລັບອັດຕາ
ອັດຕາ ທຫກ ແລະ ອ່ອນຄ່າລົງ 0,04% ສໍາລັບອັດຕາຕະຫຼາດ, ສ່ວນເງິນກີບທຽບໃສ່ເງິນບາດແຂງຄ່າຂຶ້ນ 0,56%
ທຫກ ແຕ່ອ່ອນຄ່າລົງ 0,57% ສໍາລັບອັດຕາຕະຫຼາດ, ທຽບໃສ່ປີຜ່ານມາເຫັນວ່າ: ເງິນກີບທຽບໃສ່ເງິນໂດລາແຂງຄ່າຂຶ້ນ 1,69% ສໍາລັບ
ສໍາລັບອັດຕາ ທຫກ ແລະ ແຂງຄ່າຂຶ້ນ 0,85% ສໍາລັບອັດຕາຕະຫຼາດ, ສ່ວນເງິນກີບທຽບໃສ່ເງິນບາດອ່ອນຄ່າລົງ 1,69% ສໍາລັບ
ອັດຕາ ທຫກ ແລະ ອ່ອນຄ່າລົງ 1,49% ສໍາລັບອັດຕາຕະຫຼາດ.

| ອັດຕາ | ອາທິດຜ່ານມາ 17/06/2016 | | | ອາທິດນີ້ 24/06/2016 | | | % (+) ເງິນກີບແຂງ/ (-)ອ່ອນຄ່າ | | |
|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ອັດຕາທະຄານ[1] | | | | | | | | | |
| ໂດລາ | 8.099,58 | 8.125,69 | 8.104,23 | 8.099,60 | 8.128,00 | 8.107,36 | 0,00% | -0,03% | -0,04% |
| ບາດ | 230,65 | 232,34 | 232,26 | 230,84 | 232,42 | 232,24 | -0,08% | -0,03% | 0,01% |
| ອັດຕາຕະຫຼາດ | | | | | | | | | |
| ໂດລາ | 8.113,42 | 8.143,73 | 8.128,58 | 8.115,85 | 8.147,82 | 8.131,83 | -0,03% | -0,05% | -0,04% |
| ບາດ | 230,25 | 231,80 | 231,03 | 231,88 | 232,82 | 232,35 | -0,70% | -0,44% | -0,57% |
| ຜິດດ່ຽງອັດຕາ ທຫກ ແລະ ຕະຫຼາດ: (+) ແມ່ນອັດຕາທະນາຄານທຸລະກິດແຂງກວ່າຕະຫຼາດ, (-) ແມ່ນອັດຕາທະນາຄານທຸລະກິດອ່ອນກວ່າຕະຫຼາດ, | | | | | | | | | |
| ໂດລາ | 0,17% | 0,22% | 0,30% | 0,20% | 0,24% | 0,30% | | | |
| ບາດ | -0,17% | -0,23% | -0,53% | 0,45% | 0,17% | 0,05% | | | |

### 2.2 ສະພາບຖານເງິນຕາ ແລະ ປະລິມານເງິນ M2

- ຖານເງິນຕາ ປະຈໍາອາທິດນີ້ຫຼຸດລົງ 0,27% ທຽບໃສ່ວັນທີ 17/06/2016, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 5,91%;
- ປະລິມານເງິນ M2 ເພີ່ມຂຶ້ນ 1,25% ເມື່ອທຽບໃສ່ວັນທີ 17/05/2016, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 12,56%.

### 2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນ ປະຈໍາ
ອາທິດ (ວັນທີ 20-24/06/2016) ເຫັນວ່າ ທຫກ ຊື້ໂດລາສຸດທິ 32,51 ລ້ານໂດລາ (ໃນນີ້ ຊື້ໂດລາໄດ້ 60,81 ລ້ານໂດລາ ແລະ
ຂາຍໂດລາໄດ້ 28,30 ລ້ານໂດລາ) ແລະ ຂາຍເງິນບາດສຸດທິ 1.386,75 ລ້ານບາດ (ໃນນີ້ ຊື້ບາດໄດ້ 223,31 ລ້ານບາດ ແລະ
ຂາຍບາດໄດ້ 1.610,06 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາ
ຫຼຸດລົງ 47,66% ແລະ ຫຼຸດລົງ 59,80% ສໍາລັບເງິນບາດ;
- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ປະລິມານການຊື້-ຂາຍເງິນໂດລາມີ ຈໍານວນ 2,84 ລ້ານໂດ
ລາ ແລະ ເງິນບາດມີຈໍານວນ 76 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ທຫກ ເຫັນວ່າ: ທຫລ ຂາຍໂດລາສຸດທິ ຈໍານວນ 13,40 ລ້ານໂດລາ ແລະ ຂາຍເງິນ
ບາດສຸດທິ ຈໍານວນ 8 ລ້ານບາດ;

---

[1] %ການປ່ຽນແປງຂອງອັດຕາແລກປ່ຽນ ໃນອັດຕາຂອງ ທຫກ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນໍ້າໜັກ;

- ການຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນອື່ນໆ ເຫັນວ່າ: ທຫລ ຂາຍໂດລາໄດ້ສຸດທິ ຈຳນວນ 14,87 ລ້ານໂດລາ ແຕ່ຊື້ເງິນບາດໄດ້ສຸດທິ ຈຳນວນ 354,32 ລ້ານບາດ.

ສະພາບການ ຊື້-ຂາຍເງິນຕາຕ່າງປະເທດ

(ຫົວໜ່ວຍ: ລ້ານ)

| | ອາທິດທີ່ຜ່ານມາ 13-17/06/2016 | | ອາທິດທີ 20-24/06/2016 | | (%) +ເພີ່ມຂຶ້ນ /-ຫລຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| 1. ການຊື້ເງິນຕາຕ່າງປະເທດ | **133,69** | **350,57** | **60,81** | **223,31** | **-54,51%** | **-36,30%** |
| - ທ/ຄທຸລະກິດລັດ | 16,16 | 127,27 | 16,16 | 118,33 | 0,02% | -7,02% |
| - ທ/ຄທຸລະກິດອື່ນໆ | 117,53 | 223,30 | 44,65 | 104,98 | -62,01% | -52,99% |
| 2. ການຂາຍເງິນຕາຕ່າງປະເທດ | **36,56** | **4.209,99** | **28,30** | **1.610,06** | **-22,58%** | **-61,76%** |
| - ທ/ຄທຸລະກິດລັດ | 18,04 | 143,66 | 15,21 | 177,39 | -15,67% | 23,48% |
| - ທ/ຄທຸລະກິດອື່ນໆ | 18,52 | 4.066,32 | 13,09 | 1.432,67 | -29,31% | -64,77% |
| ຊື້-ຂາຍສຸດທິ ທທກ | **97,13** | **-3.859,42** | **32,51** | **-1.386,75** | **-66,53%** | **-64,07%** |
| ຜິດດ່ຽງ ຊື້-ຂາຍ | 72,65% | -1.100,91% | 53,46% | -620,99% | -26,42% | -43,59% |
| ມູນຄ່າການຊື້-ຂາຍ | **170,24** | **4.560,55** | **89,11** | **1.833,37** | **-47,66%** | **-59,80%** |
| 3. ການຊື້ຂາຍລະຫວ່າງທຫລ ກັບ ທທກ | **-16,80** | **-18,00** | **-13,40** | **-8,00** | | |
| - ທຫລ ຊື້ຈາກ ທທກ | 0,00 | 0,00 | 4,00 | 0,00 | | |
| - ທຫລ ຂາຍໃຫ້ ທທກ | 16,80 | 18,00 | 17,40 | 8,00 | | |
| 4. ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ | **3,45** | **56,00** | **2,84** | **76,00** | | |
| 5. ທຫລ ກັບ ພາກສ່ວນ ອື່ນໆ | **-49,82** | **3,169,60** | **-14,87** | **354,32** | | |
| - ທຫລ ຊື້ຈາກ ພາກສ່ວນອື່ນໆ | 20,50 | 3,169,60 | 0,34 | 354,32 | | |
| - ທຫລ ຂາຍໃຫ້ ພາກສ່ວນອື່ນໆ | 70,32 | 0,00 | 15,22 | 0,00 | | |

### 2.4 ສະພາບອັດຕາເງິນເຟີ້

ອັດຕາເງິນເຟີ້ ໃນເດືອນ 05/2016 ຢູ່ໃນລະດັບ 1,17% ເພີ່ມຂຶ້ນ 0,21% ຈາກ 0,96% ໃນເດືອນ 04/2016.

### 2.5 ການຄຸ້ມຄອງເງິນຕາຕ່າງປະເທດ ແລະ ການສົ່ງເສີມນຳໃຊ້ເງິນກີບ

ທຫລ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ຈຳນວນ 169,78 ລ້ານໂດລາສະຫະລັດທຽບເທົ່າ ເຊິ່ງຫຼຸດລົງ 2,3% ທຽບໃສ່ອາທິດຜ່ານມາ.

### 2.6 ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ ຈຳນວນ 786 ສະບັບ ທຽບໃສ່ອາທິດຜ່ານມາ ຫຼຸດລົງ 16,02% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 622,42 ຕື້ກີບ ເພີ່ມຂຶ້ນ 31,78% ເມື່ອທຽບໃສ່ອາທິດຜ່ານມາ.

ຕິດຕາມການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (17-23/06/2016) ມີຈຳນວນ 2.100 ຄັ້ງ ໂດຍມີມູນຄ່າ 364,33 ຕື້ກີບ ຫຼຸດລົງ 6,62% ຊຶ່ງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ເຮັດທຸລະກຳຫຼາຍກວ່າໝູ່ ຈຳນວນ 543 ຄັ້ງ.

2.7 <u>ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ</u>

ດັດຊະນີຕະຫຼາດຫຼັກຊັບລາວ ໃນອາທິດນີ້ ປິດຢູ່ທີ່ 1.111,70 ຈຸດ ຫຼຸດລົງ 1,63% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດ ມີປະລິມານຊື້-ຂາຍຮຸ້ນທັງໝົດ 84.600 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 446,59 ລ້ານກີບ ເພີ່ມຂຶ້ນ 115,72% ທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍກວມເອົາ 49,97% ຂອງມູນຄ່າການຊື້-ຂາຍທັງໝົດ.

ຮຸ້ນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ມີລາຄາຊື້-ຂາຍສະເລ່ຍ 4.726 ກີບ/ຮຸ້ນ ຫຼຸດລົງ 274 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 31.700 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 149,80 ລ້ານກີບ ເພີ່ມຂຶ້ນ 2.396,75% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດກວມເອົາ 22,90% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ BCEL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນຢູ່ທີ່ 9,30%.

ຮຸ້ນຂອງບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (EDL-Gen) ມີລາຄາຊື້-ຂາຍສະເລ່ຍ 5.610 ກີບ/ຮຸ້ນ ເພີ່ມຂຶ້ນ 6 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 52.900 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 296,79 ລ້ານກີບ ເພີ່ມຂຶ້ນ 48,60% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດກວມເອົາ 56,51% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ EDL-Gen ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 13,83%.

ຮຸ້ນຂອງບໍລິສັດ ລາວເວີນ ມະຫາຊົນ (LWPC) ມີລາຄາປິດ 6.800 ກີບ/ຮຸ້ນ ຫຼຸດລົງ 200 ກີບ/ຮຸ້ນ ເມື່ອທຽບ ໃສ່ອາທິດທີ່ຜ່ານມາ, ໃນອາທິດນີ້ບໍ່ມີການຈັບຄູ່ການຊື້-ຂາຍ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 2,77% .

ຮຸ້ນຂອງບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (PTL) ມີລາຄາປິດ 2.800 ກີບ/ຮຸ້ນ ບໍ່ປ່ຽນແປງ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ໃນອາທິດນີ້ບໍ່ມີການຈັບຄູ່ການຊື້-ຂາຍ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 12,66% .

ຮຸ້ນຂອງບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ (SVN) ມີລາຄາຊື້-ຂາຍສະເລ່ຍ 3.000 ກີບ/ຮຸ້ນ ບໍ່ປ່ຽນ ແປງເມື່ອທຽບໃສ່ອາທິດທີ່ຜ່ານມາ, ໃນອາທິດນີ້ບໍ່ມີການຈັບຄູ່ການຊື້-ຂາຍ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 4,20% .

3. <u>ວຽກງານອື່ນໆ ທີ່ພົ້ນເດັ່ນ.</u>

- ຄະນະຜູ້ວ່າການ ທຫລ ໄດ້ສໍາເລັດການເຂົ້າຮ່ວມ: ❶ກອງປະຊຸມຄະນະລັດຖະບານ ຮ່ວມກັບເຈົ້າຄອງ ແລະ ເຈົ້າແຂວງ ທີ່ ຫ້ອງວ່າການລັດຖະບານ, ❷ກອງປະຊຸມ G20 ລະດັບຮອງລັດຖະມົນຕີການເງິນ ແລະ ຮອງຜູ້ວ່າການ ຄັ້ງທີ 3 ທີ່ ປະເທດ ສປ ຈີນ;
- ສໍາເລັດການຈັດກອງປະຊຸມ: ❶ຮ່ວມກັບພາກສ່ວນກ່ຽວຂ້ອງ ເຊັ່ນ: ກົມຕໍາຫຼວດເສດຖະກິດ (ປກສ), ສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ (ກະຊວງຍຸຕິທໍາ), ສານປະຊາຊົນ, ອົງການໄອຍະການປະຊາຊົນ ແລະ ຫ້ອງການ ທຫລ ຢູ່ສໍານັກງານ ຄຄຊ, ❷ເຜີຍແຜ່ລະບົບການເກັບກໍາຂໍ້ມູນ ແລະ ການລາຍງານທຸລະກໍາທີ່ໜ້າສົງໄສ ໂດຍຜ່ານລະບົບອອນລາຍ (STR Online) ໃຫ້ແກ່ບັນດາທະນາຄານທຸລະກິດທັງໝົດ ເພື່ອເປັນທິດທາງໃນການຈັດຕັ້ງປະຕິບັດ ທີ່ ທຫລ;
- ສໍາເລັດການເຂົ້າຮ່ວມ: ❶ກອງປະຊຸມປຶກສາຫາລື ກ່ຽວກັບການປັບປຸງມາດຕະຖານການພັດທະນາ ທີ່ ຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກຂັ້ນສູນກາງ ຫ້ອງການຈັດຕັ້ງ-ບໍລິຫານ, ❷ ຝຶກອົບຮົມ ໃນຫົວຂໍ້: "ການບໍລິຫານພຶດຕິກໍາຂອງພະນັກງານຢູ່ໃນອົງກອນ" ທີ່ ສະຖາບັນລາວ-ຍີ່ປຸ່ນ, ❸ກອງປະຊຸມຄົບຄະນະບໍລິຫານງານຂອງອົງການຕ້ານການຟອກເງິນສາກົນ (FATF Plenary) ທີ່ເມືອງ ປູຊານ ສ.ເກົາຫຼີ, ❹ກອງປະຊຸມວ່າດ້ວຍການເຊື່ອມໂຍງແຜນພັດທະນາເສດຖະກິດ-ສັງຄົມ 05 ປີ ລະຫວ່າງພາກສ່ວນກ່ຽວຂ້ອງ ສປປ ລາວ ແລະ ຄະນະປະຕິຮູບ ແລະ ພັດທະນາແຫ່ງຊາດ ສປ.ຈີນ ທີ່ກະຊວງແຜນການ ແລະ ການລົງທຶນ.

III. <u>ແຜນວຽກຈຸດສຸມອາທິດຕໍ່ໄປ:</u>

- ສືບຕໍ່ດໍາເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນ ດັ່ງທີ່ໄດ້ກໍານົດໄວ້ໃນແຜນວຽກງານປະຈໍາປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ;
- ຕິດຕາມຢ່າງເປັນປົກກະຕິໂດຍສະເພາະຕະຫຼາດເປີດ, ອັດຕາດອກເບ້ຍ ແລະ ອັດຕາແລກປ່ຽນລະຫວ່າງທະນາຄານ;

- ສືບຕໍ່ຄົ້ນຄວ້າ: ❶ ສຶກສາຄົ້ນຄວ້າເນື້ອໃນຂອງຫຼັກການ ບາເຊວ 2, ວິທີປະຕິບັດ ແລະ ບົດຮຽນຂອງສາກົນ ເພື່ອເປັນແນວທາງໃນການຄົ້ນຄວ້າ ແລະ ຈັດຕັ້ງປະຕິບັດ, ❷ຄົ້ນຄວ້າກ່ຽວກັບການກຳນົດຮູບແບບ ແລະ ທ່າອ່ຽງຂອງການຟອກເງິນ (Typology) ຂອງ ສປປ ລາວ, ❸ຄົ້ນຄວ້າບົດແນະນຳມາດຕະຖານສາກົນດ້ານການບັນຊີ IAS18 ແລະ ລາຍຮັບ IAS36 ການເສື່ອມມູນຄ່າຂອງຊັບສິນ ແລະ IFRS10 ເອກະສານລາຍງານທາງການເງິນແບບລວມກິດຈະການ, ❹ສ້າງລະບຽບວ່າດ້ວຍສູນຊຳລະສະສາງ, ❺ສືບຕໍ່ຄົ້ນຄວ້າການແຍກສູນຮັບຝາກຫຼັກຊັບອອກຈາກຕະຫຼາດຫຼັກຊັບລາວ;
- ສືບຕໍ່ສ້າງ ແລະ ປັບປຸງຮ່າງລະບຽບວ່າດ້ວຍລາຍການທີ່ກ່ຽວພັນຂອງບໍລິສັດຈົດທະບຽນ, ສະພາບໍລິຫານຂອງບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ, ການອອກຈຳໜ່າຍຮຸ້ນກູ້ຢູ່ຕ່າງປະເທດຂອງບໍລິສັດພາຍໃນ ສປປ ລາວ, ການບັນຊີ ແລະ ການກວດສອບໃນວຽກງານຫຼັກຊັບ, ສິດ ແລະ ໜ້າທີ່ຂອງຜູ້ກຳນົດລະຫັດຫຼັກຊັບແຫ່ງຊາດ ແລະ ການຊື້-ຂາຍຫຼັກຊັບ ທີ່ບໍ່ວາງເງິນມັດຈຳລ່ວງໜ້າ (Non Pre-Funded);
- ສືບຕໍ່ສ້າງປື້ມຄູ່ມືຖອດຖອນບົດຮຽນການເປັນປະທານ ແລະ ເຈົ້າພາບກອງປະຊຸມຂັ້ນສູງວຽກງານອາຊຽນ ແລະ ອາຊຽນ+3 ຂອງຂະແໜງການທະນາຄານ ທີ່ນະຄອນຫຼວງວຽງຈັນ;
- ສືບຕໍ່ປະຕິບັດເງື່ອນໄຂ PRSO 8-11 ຕາມແຜນການ.

ຮ. ຫົວໜ້າຫ້ອງການທະນາຄານແຫ່ງ ສປປ ລາວ.

ສຸກັນ ຈັນທະອິງ